# ອົງການ IOM ປະຈຳ ສປປ ລາວ

# ບົດສະຫຼຸບປີ 2020

ໃນປີ 2020, ກິດຈະກຳຂອງອົງການ IOM ສປປ ລາວໄດ້ເຂົ້າເຖິງຜູ້ໄດ້ຮັບຜົນປະໂຫຍດຈຳນວນ **549,000 ຄົນ** ພາຍໃຕ້ 10 ໂຄງການ ໂດຍການຊ່ວຍເຫຼືອຈາກ **ຜູ້ໃຫ້ທຶນຈຳນວນ 8 ແຫ່ງ**.

| 10 | 8 | 1.55 MUSD | >549,000 | 14 |
|---|---|---|---|---|
| ໂຄງການ | ຜູ້ໃຫ້ທຶນ | ງົບປະມານທີ່ຖືກນຳໃຊ້ | ຜູ້ໄດ້ຮັບຜົນປະໂຫຍດ | ແຂວງ |

ໃນນາມທີ່ ສປປ ລາວ ເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ມີຊາຍແດນ ຕິດກັບ 5 ປະເທດ, ສປປ ລາວ ເປັນປະເທດຕົ້ນທາງຫຼືທາງຜ່ານຫຼັກສຳລັບບັນດາຜູ້ເຄື່ອນຍ້າຍໃນຂອບເຂດພາກພື້ນແມ່ນ້ຳຂອງ. ໃນປີ 2020, ການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19, ຊຸມຊົນທ່ອງຖິ່ນ ແລະ ປະຊາກອນເຄື່ອນຍ້າຍໄດ້ປະເຊີນກັບຄວາມສ່ຽງທີ່ຫຼາຍຂຶ້ນ ເຊັ່ນ ຄວາມສ່ຽງທາງດ້ານສຸຂະພາບ, ການຂ້າມຊາຍແດນທີ່ບໍ່ປົກກະຕິ ແລະ ບໍ່ປອດໄພທີ່ເພີ່ມຂຶ້ນ, ບາດແຜທາງດ້ານຈິດໃຈ ແລະ ການເຂົ້າເຖິງການຊ່ວຍເຫຼືອທາງດ້ານສັງຄົມທີ່ຈຳກັດ.



ອົງການ IOM ສປປ ລາວໄດ້ຈັດກິດຈະກຳໃນຂອບເຂດທົ່ວປະເທດເພື່ອປົກປ້ອງ, ຊ່ວຍເຫຼືອ, ແລະ ສົ່ງເສີມຄວາມເຂັ້ມແຂງຂອງຊຸມຊົນທ່ອງຖິ່ນ, ປະຊາກອນເຄື່ອນຍ້າຍ, ພະນັກງານຂັ້ນບ້ານ ແລະ ແຂວງ, ພະນັກງານຊາຍແດນ ແລະ ກຸ່ມອື່ນໆທີ່ມີຄວາມຕ້ອງການທາງດ້ານການຊ່ວຍເຫຼືອທີ່ຮີບດ່ວນ ແລະ ການສ້າງຄວາມເຂັ້ມແຂງທາງດ້ານວິຊາການ.

**ມັງກອນ - ທັນວາ 2020**

## ການຮັບມືກັບ COVID-19

**46,921** ເຄື່ອງມືທາງດ້ານຂໍ້ມູນຂ່າວສານ, ການສຶກສາ ແລະ ການສື່ສານ (IEC) ກ່ຽວກັບການປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ໄດ້ຖືກເຜີຍແຜ່ໃນຂອບເຂດ 9 ແຂວງ.

**1,212** ຊຸດເຄື່ອງຊ່ວຍເຫຼືອໂດຍກົງໄດ້ຖືກແຈກຢາຍໃຫ້ກັບຫຼາກຫຼາຍກຸ່ມຄົນ ໂດຍລວມທັງຜູ້ເຄື່ອນຍ້າຍ.

**24,566** ອຸປະກອນປ້ອງກັນຕົວເອງ (PPE) ໄດ້ຖືກແຈກຢາຍ.

**11,053** ທ່ານຈາກໜ່ວຍງານຂັ້ນບ້ານ, ເມືອງ, ແຂວງ ແລະ ຊຸມຊົນໄດ້ເຂົ້າຮ່ວມກິດຈະກຳ ແລະ ການຝຶກອົບຮົມກ່ຽວກັບການ ເຄື່ອນຍ້າຍແບບປອດໄພ.

## ໂຄງການລົດເມ ແລະ ວິທະຍຸ

**2,461** ຄົນຈາກເສັ້ນທາງລົດເມຈຳນວນ 5 ສາຍໄດ້ເຂົ້າເຖິງການໂຄສະນາຕໍ່ມື້ ໂດຍຜ່ານໂຄງການລົດເມດັ່ງກ່າວ.

**120** ໂປສເຕີຈາກ 7 ປະເພດໄດ້ຖືກຕິດໃນລົດເມຈຳນວນ 5 ຄັນ.

**36** ເມືອງໃນ 9 ແຂວງໄດ້ຮັບຜົນປະໂຫຍດຈາກໂຄງການວິທະຍຸຊຸມຊົນທີ່ ອອກຂ່າວກ່ຽວກັບການແຜ່ເຊື້ອພະຍາດ COVID-19 ແລະ ການເຄື່ອນຍ້າຍແບບປອດໄພ.

**300,000** ຄົນຈາກ 5 ແຂວງໄດ້ເຂົ້າເຖິງການໂຄສະນາທາງວິທະຍຸກ່ຽວກັບການບໍ່ມີບາດແຜທາງຈິດໃຈ.

# ບົດສະຫຼຸບປີ 2020

## ການເຄື່ອນຍ້າຍແຮງງານ ແລະ ການພັດທະນາຊັບພະຍາກອນມະນຸດ

**12,269** ເຄື່ອງມືທາງດ້ານຂໍ້ມູນຂ່າວສານ, ການສຶກສາ ແລະ ການສື່ສານໄດ້ຖືກເຜີຍແຜ່ໃຫ້ກັບປະຊາກອນເຄື່ອນຍ້າຍ.

**113** ທ່ານຈາກໜ່ວຍງານລັດໄດ້ເຂົ້າຮ່ວມກອງປະຊຸມກ່ຽວກັບການເຄື່ອນຍ້າຍແບບປອດໄພ.

**3,452** ນັກສຶກສາໃນສະຖາບັນພັດທະນາສີມືແຮງງານໄດ້ເຂົ້າຮ່ວມໂຄງການກ່ຽວກັບການເຄື່ອນຍ້າຍແບບປອດໄພ.

**69** ຜູ້ເຄາະຮ້າຍຈາກການກົດຂີ່ທາງດ້ານແຮງງານໄດ້ຮັບຊຸດເຄື່ອງການຊ່ວຍເຫຼືອທາງກົງ ແລະ ການຝຶກອົບຮົມການນຳໃຊ້ຊີວິດ.



## ການຄຸ້ມຄອງການເຂົ້າອອກ-ເມືອງ ແລະ ຊາຍແດນ

**10** ແຫ່ງຂອງດ່ານກວດຄົນເຂົ້າ-ອອກເມືອງໄດ້ຖືກຢ້ຽມຢາມເພື່ອການປະເມີນຄວາມອາດສາມາດໃນການຮັບມືກັບ COVID-19.

**7,400** ເຄື່ອງມືທາງດ້ານຂໍ້ມູນຂ່າວສານ, ການສຶກສາ ແລະ ການສື່ສານໄດ້ຖືກແຈກຢາຍໃນດ່ານກວດຄົນເຂົ້າ-ອອກເມືອງຈຳນວນ 10 ແຫ່ງ.

**137,100** ອຸປະກອນປ້ອງກັນຕົວເອງໄດ້ຖືກແຈກຢາຍໃຫ້ແກ່ພະນັກງານໃນດ່ານກວດຄົນເຂົ້າ-ອອກເມືອງ.

**463** ທ່ານຈາກໜ່ວຍງານລັດໄດ້ເຂົ້າຮ່ວມກອງປະຊຸມຂະບວນການປະຕິບັດງານຕາມມາດຕະຖານ (SOP) ໃນດ່ານກວດຄົນເຂົ້າ-ອອກເມືອງຈຳນວນ 10 ແຫ່ງ.

**259** ທ່ານໄດ້ເຂົ້າຮ່ວມໃນການປຶກສາຫາລືກ່ຽວກັບ SOP.

## ໂຄງການການເຄື່ອນຍ້າຍພາກພື້ນອາຊີ

**5** ທ່ານຈາກໜ່ວຍງານລັດໄດ້ເຂົ້າຮ່ວມກອງປະຊຸມລະດັບພາກພື້ນກ່ຽວກັບການປະສານງານທາງດ້ານການເຄື່ອນຍ້າຍແບບປອດໄພໃຫ້ແກ່ປະເທດຕົ້ນທາງ ຊຶ່ງໄດ້ຖືກຈັດຢູ່ປະເທດກຳປູເຈຍໂດຍການຊ່ວຍເຫຼືອຂອງອົງການ IOM.

**191** ທ່ານຈາກພະນັກງານລັດ, ສະມາຊິກຄະນະກຳມະການຕ້ານການຄ້າມະນຸດ ແລະ ນາຍບ້ານທີ່ມາຈາກ 6 ແຂວງພາກເໜືອໄດ້ຮັບການຝຶກອົບຮົມ.

**24** ຈາກໜ່ວຍງານລັດໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານສະຖານທີ່ພັກຊົ່ວຄາວ ແລະ ການຊ່ວຍເຫຼືອກຸ່ມທີ່ມີຄວາມສ່ຽງໂດຍການຈັດກິດຈະກຳການຢ້ຽມຢາມສະຖານທີ່ພັກເຊົາໃນ 3 ແຂວງພາກໃຕ້.



ແຮງງານຢູ່ທີ່ຕະຫຼາດແຫ່ງ 1 ຂອງແຂວງສະຫວັນນະເຂດ, 2020

## ການຕ້ານການຄ້າມະນຸດ

**61** ທ່ານຈາກໜ່ວຍງານລັດໄດ້ຮັບການຝຶກອົບຮົມກ່ຽວກັບທັກສະການສຳພາດ, ແລະ ຄູ່ມືຄູຝຶກຈຳນວນ **45** ສະບັບໄດ້ຖືກເຜີຍແຜ່.

ອົງການ IOM ຈັດຝຶກອົບຮົມພະນັກງານຈຳນວນ **42** ທ່ານທີ່ຫ້ອງການອົງການໄອຍະການປະຊາຊົນສູງສຸດກ່ຽວກັບການດຳເນີນຄະດີການຄ້າມະນຸດ ແລະ ແຈກຢາຍຄູ່ມືຄູຝຶກຈຳນວນ **400** ສະບັບ.

**90** ທ່ານທີ່ເປັນຕົວແທນລະດັບຊາດ ແລະ ຂັ້ນແຂວງໃນການເຂົ້າຮ່ວມການເຜີຍແຜ່ບົດແນະນຳການປົກປ້ອງ, ການຊ່ວຍເຫຼືອ ແລະ ການສົ່ງຕໍ່ຜູ້ເຄາະຮ້າຍຈາກການຄ້າມະນຸດ.

**41** ທ່ານໄດ້ຮັບການຝຶກອົບຮົມການກຳນົດຕົວຜູ້ເຄາະຮ້າຍ.

# ອົງການ IOM ປະຈຳ ສປປ ລາວ

# ບົດສະຫຼຸບປີ 2020



ສຳພາດຜູ້ເຄື່ອນຍ້າຍໃນຈຸດປ່ຽນເສັ້ນທາງສະຖານີລົດເມໃນນະຄອນຫຼວງວຽງຈັນ, ພະຈິກ 2020

## ການເຝົ້າລະວັງ

**347** ຜູ້ເຄື່ອນຍ້າຍຈາກຈຸດປ່ຽນເສັ້ນທາງ ແລະ ໃນລົດເມສາຍຕ່າງໆໄດ້ຖືກສຳພາດໂດຍການນຳໃຊ້ເຄື່ອງມືການຕິດຕາມການຖືກເຄື່ອນຍ້າຍ (DTM).

**366** ຜູ້ເຄື່ອນຍ້າຍທີ່ກັບຄືນປະເທດ ແລະ ຜູ້ເຄາະຮ້າຍຈາກການຄ້າມະນຸດທີ່ພັກເຊົາໃນສູນກັກກັນໄດ້ຖືກສຳພາດ.

**140** ຜູ້ໃຫ້ຂໍ້ມູນໄດ້ຕອບຄຳຖາມກ່ຽວກັບຄວາມສ່ຽງຂອງແຮງງານເຄື່ອນຍ້າຍ.

## ການມີສ່ວນຮ່ວມສາທາລະນະ ແລະ ສື່ຕ່າງໆ

**18** ຄັ້ງທີ່ໄດ້ເຜີຍແຜ່ຂ່າວ, ຫົວຂໍ້ຂ່າວ ແລະ ບົດຄວາມທີ່ກ່ຽວກັບກິດຈະກຳຂອງອົງການ IOM ສປປ ລາວ ໂດຍສື່ພາຍໃນ ແລະ ຕ່າງປະເທດ.

**100** ທ່ານໄດ້ເຂົ້າຮ່ວມກອງປະຊຸມຊາວໜຸ່ມເພື່ອ SDG ລາວເນື່ອງໃນໂອກາດການສະເຫຼີມສະຫຼອງວັນອາສາສະມັກສາກົນ.

**200** ທ່ານໄດ້ເຂົ້າຮ່ວມວັນຜູ້ເຄື່ອນຍ້າຍສາກົນ ຊຶ່ງນຳພາໂດຍອົງການແຮງງານໂລກ ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈັດຂຶ້ນທີ່ມະຫາວິທະຍາໄລແຫ່ງຊາດ.

**4,477** ທ່ານໄດ້ເຂົ້າເຖິງກິດຈະກຳສື່ມອນລິນໃນໄລຍະເວລາ 5 ມື້ ຊຶ່ງຖືກຈັດຂຶ້ນເນື່ອງໃນວັນຜູ້ເຄື່ອນຍ້າຍສາກົນ.

**8,511** ທ່ານໄດ້ເຂົ້າເຖິງກິດຈະກຳສື່ມອນລິນກ່ຽວກັບວັນຕ້ານການຄ້າມະນຸດໂລກ ເນື່ອງໃນວັນຜູ້ເຄື່ອນຍ້າຍສາກົນໃນໄລຍະເວລາ 5 ມື້.

## ສິ່ງພິມ

**4** ສິ່ງພິມໄດ້ຖືກເຜີຍແຜ່ ໃນປີ 2020:

- *ບົດສຳຫຼວດຜູ້ເຄື່ອນຍ້າຍເດີນທາງກັບປະເທດ*
- *ຄວາມສ່ຽງທີ່ກ່ຽວຂ້ອງກັບພະຍາດ COVID-19 ແລະ ວິໄສທັດຂອງຄົນຕ່າງດ້າວໃນ ສປປ ລາວ*
- *ບົດວິເຄາະແນວໂນ້ມການເຄື່ອນຍ້າຍຂອງ ສປປ ລາວ*
- *ຜົນການສຶກສາຄົ້ນຄ້ວາ ສະພາບຂອງການເຄື່ອນຍ້າຍແຮງງານ ຢູ່ ສປປ ລາວ.*

**8** ບົດລາຍງານກ່ຽວກັບກິດຈະກຳການຮັບມືສະຖານະການ COVID-19 ປະຈຳເດືອນໄດ້ຖືກເຜີຍແຜ່.

## ຜູ້ໃຫ້ທຶນ

# ບົດສະຫຼຸບປີ 2020




ການລົມນະລົງໃນຊຸມຊົນກ່ຽວກັບການເຄື່ອນຍ້າຍທີ່ປອດໄພ, ກັນຍາ 2020.




ພະນັກງານ IOM ທີ່ຈຸດກວດຊາຍແດນ, ນະຄອນຫຼວງວຽງຈັນ, 2020.



ການລົມນະລົງໃນຊຸມຊົນກ່ຽວກັບການເຄື່ອນຍ້າຍທີ່ປອດໄພ, ກັນຍາ 2020.



ລົງຢ້ຽມຢາມສູນໃນແຂວງທາງພາກໃຕ້, ພະຈິກ 2020.



ການເຝິກອົບຮົມການເຄື່ອນຍ້າຍທີ່ປອດໄພໃຫ້ນັກຮຽນທີ່ສູນພັດທະນາແຮງງານ, ພະຈິກ 2020.



ການມອບ-ຮັບ PPE ທີ່ຂົວມິດຕະພາບ ລາວ-ໄທ III, 2020.




ການສ້າງແຜນທີ່ດ່ານເຂົ້າປະເທດ ທີ່ຈຸດກວດສາກົນ ບໍ່ເຕັນ, 2020.